ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***************

ສູນກາງ ຊປປລ

ຄະນະບໍລິຫານງານ

ເລກທີ 481 /ລຂ

ນະຄອນຫຼວງວຽງຈັນ, ວັນທີ 21 ສິງຫາ 2016

# <u>ບົດແນະນຳ</u>

## <u>ວ່າດ້ວຍການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມລາວ</u>

- ອີງໃສ່ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ໂດຍສະເພາະແມ່ນໜ້າທີ່ລວມການສ້າງບາດກ້າວບຸກທະລຸໃນ 4 ດ້ານ, 4 ເນື້ອໃນ, 4 ຄາດໝາຍ.
- ອີງໃສ່ມະຕິຕົກລົງຂອງກົມການເມືອງສູນກາງພັກເລກທີ 01/ກມສພ, ລົງວັນທີ 7 ມັງກອນ 2010 ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນຍ້ອງຍໍໃນໄລຍະໃໝ່ ( ຮັກຊາດ ແລະ ພັດທະນາ )
- ອີງໃສ່ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດຄັ້ງທີ VI ກ່ຽວກັບການສືບຕໍ່ຂໍ້ແຂ່ງຂັນ 4 ບຸກ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 4 ບຸກຂອງ ຄຊປປລ ໃນການຕີລາຄາປະເມີນສະມາຊິກ, ການຄັດເລືອກຮາກຖານ, ໜ່ວຍຮາກຖານ ແຕ່ລະຂັ້ນໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ.

ຄະນະບໍລິຫານງານ ສູນກາງ ຊປປລ ອອກບົດແນະນຳ:

## I. <u>ຈຸດປະສົງ ແລະ ຄວາມສຳຄັນຂອງການຈັດຕັ້ງປະຕິບັດຂະບວນການ 4 ບຸກ.</u>

### 1. <u>ຈຸດປະສົງ</u>

- ການຈັດຕັ້ງຂະບວນການແຂ່ງຂັນ 4 ບຸກ ແມ່ນເພື່ອຍົກສູງຄຸນນະພາບຂອງຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ ໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ມີແບບແຜນວິທີການເຄື່ອນໄຫວທີ່ຖືກຕ້ອງ.
- ເພື່ອນຳເອົາກຳລັງແຮງສັງລວມຂອງຊາວໜຸ່ມ ເຂົ້າຮ່ວມປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ລະບຽບການຕ່າງໆ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ເປັນຂະບວນການຟົດຟື້ນ.
- ເປັນເຈົ້າການເອງໃນການຝຶກຝົນຫຼໍ່ຫຼອມ, ເສີມຂະຫຍາຍລະດັບປັນຍາ-ທັດສະນະປະຕິວັດສ້າງ ເພື່ອນຳເອົາບົດຮຽນຂອງບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 4 ບຸກ. ແນໃສ່ພັດທະນາຊາວໜຸ່ມ-ເຍົາວະຊົນ ແລະ ການຈັດຕັ້ງ, ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ໃນໝູ່ຊາວໜຸ່ມ-ເຍົາວະຊົນ ໃຫ້ຫຼຸດໜ້ອຍຖອຍລົງເປັນແຕ່ລະໄລຍະ.

2. ຄວາມສຳຄັນ

ການປະຕິບັດຂໍ້ແຂ່ງຂັນ 4 ບຸກ ເປັນການສະແດງອອກເຖິງຂະບວນການຂອງ [illegible]

ປະຕິບັດແນວທາງນະໂຍບາຍຂອງພັກ-ລັດ, ມະຕິຂອງ ຄຊປປລ. ດັ່ງນັ້ນ, ການປະຕິບັດຂໍ້ແຂ່ງຂັນ [illegible]

ຄວາມສຳຄັນຄື:

- ເປັນການລະດົມທຸກກຳລັງແຮງຂອງຊາວໜຸ່ມເຂົ້າໃນການປະຕິບັດ, ບັນດາແນວທາງນະໂຍບາຍ [illegible] ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃຫ້ສຳເລັດການຄາດໝາຍ.

- ເຮັດໃຫ້ການຈັດຕັ້ງແຕ່ລະຂັ້ນ ມີຄວາມເຂັ້ມແຂງ,ໜັກແໜ້ນ, ມີຄວາມສາມັກຄີພາຍໃນ [illegible] ແບບແຜນວິທີເຮັດວຽກຢ່າງຖືກຕ້ອງ, ມີຂະບວນການຟົດຟື້ນ ແລະ ມີປະສິດທິຜົນ.

- ຜ່ານຂະບວນການແຂ່ງຂັນສາມາດສ້າງໄດ້ການຈັດຕັ້ງ, ບຸກຄົນ ທີ່ເປັນຕົວແບບຊາວໜຸ່ມ 4 ບຸກ ແລະ ບຸກຄົນດີເດັ່ນຮອບດ້ານ.

## II. ເນື້ອໃນຂໍ້ແຂ່ງຂັນ.

ເນື້ອໃນຂໍ້ແຂ່ງຂັນ 4 ບຸກປະກອບມີ:

1. ບຸກດ້ານແນວຄິດ

- ສຶກສາອົບຮົມການເມືອງແນວຄິດໃຫ້ຊາວໜຸ່ມລາວ ໃນຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ກຳມະກອນ ແລະ ປະຊາຊົນລາວບັນດາເຜົ່າ.

- ມີແບບແຜນວິທີຄິດປາງວິທະຍາສາດ, ມີຄວາມກ້າວໜ້າ ແລະ ຮັບປະກັນໃຫ້ມີແນວຄິດເປັນເອກະພາບເຂົ້າ ແນວທາງແຜນນະໂຍບາຍຂອງພັກ-ລັດ.

- ມີວິໄສທັດເບິ່ງກວ້າງມອງໄກ, ມີຈິນຕະນາການໃໝ່, ຮັກລະບອບປະຊາທິປະໄຕ ປະຊາຊົນ, ລົບລ້າງແນວຄິດແບບຈຸ້ມເຈື້ອ, ເຊື່ອສາຍ, ຊົນເຜົ່າ, ຮັກສາເດີມ, ຂີ້ຄ້ານມັກງ່າຍ, ແນວຄິດເອື່ອຍອີງ ແລະ ອື່ນໆ.

2. ບຸກດ້ານການຝຶກຝົນຫຼໍ່ຫຼອມຮ່ຳຮຽນ

- ຝຶກຝົນຫຼໍ່ຫຼອມດ້ວຍການນຳເອົາຕົນເອງເຂົ້າສູ່ຂະບວນການ, ຜ່ານຂະບວນການຫຼາຍເທົ່າໃດຍິ່ງເຮັດໃຫ້ສະມາຊິກຊາວໜຸ່ມ ມີຄຸນທາດການເມືອງຫຼາຍຂຶ້ນໃນດ້ານຕ່າງໆ

- ຮ່ຳຮຽນວິຊາຊີບ, ວິຊາສະເພາະ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າ.

- ຮຽນຮູ້ການນຳໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝໃນຍຸກປະຈຸບັນຂອງໂລກ, ຮ່ຳຮຽນປະຫວັດສາດຂອງຊາດລາວ, ຮຽນຮູ້ຄຸນສົມບັດສົມທຳປະຕິວັດ, ມູນເຊື້ອອັນດີງາມຂອງຊາດ, ຂອງພັກ ແລະ ປະຊາຊົນ.

- ຮ່ຳຮຽນພາສາຕ່າງປະເທດ, ຮູ້ແບບແຜນວິທີເຮັດວຽກ ແລະ ວິທີການນຳພາ-ຄຸ້ມຄອງບໍລິຫານວຽກງານ.

3. ບຸກດ້ານວຽກງານການຈັດຕັ້ງ

- ປັບປຸງ, ກໍ່ສ້າງການຈັດຕັ້ງທຸກຂັ້ນໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

- ເຕົ້າໂຮມຊາວໜຸ່ມລາວບັນດາເຜົ່າເຂົ້າຢູ່ໃນການຈັດຕັ້ງ ແນໃສ່ນຳໃຊ້ກຳລັງແຮງຂອງເຂົາເຈົ້າເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

- ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່, ມີລະບຽບຕໍ່ການຈັດຕັ້ງ ແລະ ເຄົາລົບລະບຽບກົດໝາຍ.

ຂະຫຍາຍມະຫາຊົນຜູ້ທີ່ກ້າວໜ້າເຂົ້າເປັນສະມາຊິກ.

- ຍົກແຜ່ນຄວາມສາມາດກິນຊາວໜຸ່ມນຳລາຍປະເທດທີ່ຕົນມີຍຸດທະສາດ, ຊາວໜຸ່ມໃນຂົງເຂດພາກພື້ນ ແລະ ໃນໂລກ.

4. ບຸກຄົນວິຊາຊີບ-ສ້າງວຽກເຮັດງານທຳ

- ຄະນະບໍລິຫານງານ ຊປປລ ແຕ່ລະຂັ້ນຕ້ອງຮ່ວມກັບກັບການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຝຶກອົບຮົມວິຊາຊີບ, ສ້າງເງື່ອນໄຂວຽກເຮັດງານທຳໃຫ້ຊາວໜຸ່ມ ຜູ້ທີ່ບໍ່ມີວຽກເຮັດງານທຳການເງື່ອນໄຂຕົວຈິງ.

- ສະມາຊິກ ຊປປລ ທີ່ເປັນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕ້ອງເປັນເຈົ້າການປະຕິບັດໜ້າທີ່ວຽກງານວິຊາສະເພາະ ຕາມຄວາມຮັບຜິດຊອບຂອງຕົນໃຫ້ໄດ້ຮັບຜົນດີ, ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ແລະ ພາສາຕ່າງປະເທດໃຫ້ສູງຂຶ້ນ.

- ສະມາຊິກ ຊປປລ ທີ່ເປັນນັກຮຽນ-ນັກສຶກສາ ຕ້ອງເອົາໃຈໃສ່ສຶກສາຮ່ຳຮຽນໃຫ້ປະສົບຜົນສຳເລັດ.

- ສະມາຊິກ ຊປປລ ແຕ່ລະຄົນ ຕ້ອງຊອກວຽກເຮັດງານທຳດ້ວຍຕົນເອງຕາມຄວາມຮູ້ຄວາມສາມາດ.

## III. ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ.

1. ການກະກຽມ ແລະ ວາງແຜນ.

- ປັບປຸງ ຫຼື ແຕ່ງຕັ້ງຄະນະຮັບຜິດຊອບ ແລະ ແບ່ງໜ້າທີ່ຄວາມຮັບຜິດຊອບໃຫ້ແຕ່ລະສະຫາຍຢ່າງຈະແຈ້ງ.

- ສັງລວມຂໍ້ມູນສະພາບການເຄື່ອນໄຫວ, ລັກສະນະບວນການຂອງຊາວໜຸ່ມໃນຂັ້ນຂອງຕົນ ຫຼື ຖອດຖອນບົດຮຽນການແຂ່ງຂັນໃນໄລຍະຜ່ານມາ.

- ປັບປຸງແຜນການຄາດໝາຍຊີ້ຊັດແຕ່ລະດ້ານຢ່າງລະອຽດໃຫ້ສອດຄ່ອງກັບສະພາບຕົວຈິງໃນຂັ້ນຂອງຕົນ.

- ລາຍງານຄະນະພັກ-ອຳນາດການປົກຄອງຂັ້ນຂອງຕົນ ແລະ ຄຊປປລ ຂັ້ນເທິງຖັດຕົນ ເພື່ອຂໍທິດຊີ້ນຳ ແລະ ສະໜັບສະໜູນໃນການຈັດຕັ້ງປະຕິບັດແຜນການ.

2. ການເປີດຂະບວນການແຂ່ງຂັນ

ຖ້າບ່ອນໃດໄດ້ເປີດການແຂ່ງຂັນແລ້ວ ແມ່ນບໍ່ຈຳເປັນຈະເປີດອີກໝາຍອ່າ: ໃຫ້ສືບຕໍ່ປະຕິບັດໄປເລື້ອຍໆ ຖ້າ ຄຊປປລ ຮາກຖານໃດ ບໍ່ທັນໄດ້ເປີດການການແຂ່ງຂັນໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

- ຄະນະບໍລິຫານງານ ຊປປລ ຮາກຖານ, ໜ່ວຍຮາກຖານ ເປີດກອງປະຊຸມສະໄໝສາມັນ ຫຼື ວິສາມັນຂຶ້ນ, ເນື້ອໃນຕົ້ນຕໍຂອງກອງປະຊຸມແມ່ນຜ່ານເນື້ອໃນ, ແຜນການ ແລະ ມາດຖານເງື່ອນໄຂຂອງຂໍ້ແຂ່ງຂັນ 4 ບຸກ.

- ຜ່ານບົດເປີດຂະບວນການແຂ່ງຂັນເປັນທາງການ ແລ້ວເຊັນຕາງໜ້າ ເລຂາ ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມທີ່ຢູ່ຂັ້ນລຸ່ມຖັດຕົນຂັ້ນຈັບມື ຫຼື ລົງທະບຽນຢູ່ເທິງເວທີຕໍ່ໜ້າຄະນະນຳ ເພື່ອໄປຈັດຕັ້ງປະຕິບັດຕົວຈິງ.

- ຄະນະພັກ ຫຼື ຄະນະບໍລິຫານງານ ຊປປລ ຂັ້ນເທິງໄອ້ລົມ.

- ເລຂາຄະນະບໍລິຫານງານ ຊປປລ ຫຼື ຕາງໜ້າຜູ້ລົງທະບຽນ ເປີດຂະບວນແຂ່ງຂັນຮັບຄຳໄອວາດ.

3. ລະບອບລາຍງານ

3.1 ຄຊປປລກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ

ສຳລັບ ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ແລະ ຄຊປປລ ທີ່ມີຂັ້ນທຽບເທົ່າຂັ້ນເມືອງໃຫ້ປະຕິບັດດັ່ງນີ້:

- ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ໃຫ້ລາຍງານໃຫ້ ຄຊປປລ ສູນກາງ ຫົກເດືອນຕໍ່ຄັ້ງ.

- ຄຊປປລ ທຽບເທົ່າເມືອງ ທີ່ຂຶ້ນກັບ ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ການເມືອງ ໃຫ້ລາຍງານ ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ສາມ ເດືອນຕໍ່ຄັ້ງ.
- ໜ່ວຍຊາວໜຸ່ມ, ໜ່ວຍຮາກຖານ, ຮາກຖານຊາວໜຸ່ມ ທີ່ຂຶ້ນກັບ ຄຊປປລ ກະຊວງ, ອົງການລັດ ທຽບເທົ່າກະຊວງ, ອົງການການເມືອງ ແມ່ນລາຍງານໃຫ້ ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ໜຶ່ງເດືອນຕໍ່ຄັ້ງ.
- ໜ່ວຍຊາວໜຸ່ມ, ໜ່ວຍຮາກຖານ, ຮາກຖານ ທີ່ຂຶ້ນກັບ ຄຊປປລ ທຽບເທົ່າເມືອງ ແມ່ນລາຍງານໃຫ້ ຄຊປປລ ທຽບເທົ່າເມືອງ ໜຶ່ງເດືອນຕໍ່ຄັ້ງ.

3.2 ຄຊປປລທ້ອງຖິ່ນ:

- ຄຊປປລ ແຂວງ, ນະຄອນຫຼວງ ລາຍງານໃຫ້ ຄຊປປລ ສູນກາງ ຫົກເດືອນຕໍ່ຄັ້ງ.
- ຄຊປປລ ເມືອງລາຍງານໃຫ້ ຄຊປປລ ແຂວງ, ນະຄອນຫຼວງ ສາມເດືອນຕໍ່ຄັ້ງ.
- ໜ່ວຍຊາວໜຸ່ມ, ໜ່ວຍຮາກຖານ, ຮາກຖານ, ໂຮງຮຽນ, ໂຮງງານ ລາຍງານໃຫ້ ຄຊປປລ ເມືອງ ໜຶ່ງ ເດືອນຕໍ່ຄັ້ງ.
- ໜ່ວຍຮາກຖານ, ຮາກຖານບ້ານ ລາຍງານໃຫ້ ຄຊປປລ ເມືອງ ໜຶ່ງເດືອນຕໍ່ຄັ້ງ.
- ໜ່ວຍຊາວໜຸ່ມ ລາຍງານໃຫ້ ຄຊປປລ ຮາກຖານບ້ານ ໜຶ່ງເດືອນຕໍ່ຄັ້ງ.

4. ການສະຫຼຸບຕີລາຄາປະເມີນຜົນຂໍ້ແຂ່ງຂັນ 4 ບຸກ ຂອງສະມາຊິກ ຊປປລ

- ໜ່ວຍຊາວໜຸ່ມ, ໜ່ວຍຮາກຖານຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ. ເລີ່ມຈາກການຕີລາຄາແບ່ງປະເພດສະມາຊິກ ຊປປລ ແຕ່ລະລະຫາຍ ດ້ວຍການຜ່ານບົດລໍາຫຼວດຕົນເອງ, ຈັດປະເພດໃຫ້ຕົນເອງຕາມມາດຖານແຕ່ລະດ້ານກ່ອນແລ້ວໝູ່ຄູ່ ແລະ ການຈັດຕັ້ງພາຍໃນໜ່ວຍ ຈຶ່ງຕີລາຄາຈັດປະເພດໃຫ້, ຈາກນັ້ນຈຶ່ງຕີລາຄາແບ່ງປະເພດໜ່ວຍຂອງຕົນຕາມມາດຖານ 4 ບຸກ.

- ໜ່ວຍຊາວໜຸ່ມລາຍງານຜົນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ໃຫ້ ຄຊປປລ ຂັ້ນຮາກຖານ ຫຼື ຂັ້ນເທິງຖັດຕົນ ແລະ ຄຊປປລ ແຕ່ລະຂັ້ນ ກໍ່ລາຍງານຂັ້ນເທິງຖັດຕົນຕາມລໍາດັບ ແຕ່ການລາຍງານຕ້ອງເປັນລາຍລັກອັກສອນ, ມີການສະຫຼຸບ, ມີລາຍເຊັນຢັ້ງຢືນຂອງຄະນະພັກແຕ່ລະຂັ້ນ.

- ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ວາງທິດທາງແຜນການໃນການສືບຕໍ່ຈັດຕັ້ງປະຕິບັດ, ຄຽງຄູ່ກັນນີ້ກໍ່ມີການຍ້ອງຍໍຕາມຄວາມຈິງ ແລະ ເປີດການແຂ່ງຂັນຮອບໃໝ່.

5. ໄລຍະເວລາການສະຫຼຸບຕີລາຄາປະເມີນຜົນຂໍ້ແຂ່ງຂັນ 4 ບຸກ

- ການສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງ ຄຊປປລ ແຕ່ລະຂັ້ນ ແມ່ນມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ເພື່ອສະຫຼຸບປະຈໍາປີ ( ເດືອນມັງກອນ ຫາ ເດືອນທັນວາຂອງທຸກໆປີ ), ເລີ່ມປະເມີນຜົນແຕ່ເດືອນກໍລະກົດຂອງທຸກໆປີເປັນຕົ້ນໄປ ແລະ ໃຫ້ສໍາເລັດແລ້ວລາຍງານຜົນຂອງການປະເມີນ, ກອດກາ ໃຫ້ສູນກາງ ຊປປລ ( ສໍາລັບແຂວງ, ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ).

## IV. ການຕີລາຄາປະເພດສະມາຊິກ ຊປປລ ແລະ ຄຊປປລ

1. ການຄັດເລືອກມາດຖານສະມາຊິກ ຊປປລ 4 ບຸກ ແມ່ນແຍກອອກເປັນ2 ພາກສ່ວນຄື:

1.1 ສະມາຊິກ ຊປປລ ທີ່ເປັນພະນັກງານ, ທະຫານ, ຕໍາຫຼວດ, ລັດວິສາຫະກິດ.

1.2 ສະມາຊິກ ຊປປລ ຂັ້ນບ້ານ, ນັກຮຽນ-ນັກສຶກສາ, ໂຮງຈັກ-ໂຮງງານ.

- ➢ ມາດຖານຄັດເລືອກສະມາຊິກ ຊປປລ ທີ່ເປັນພະນັກງານ, ທະຫານ, ຕຳຫຼວດ, ລັດວິສາຫະກິດມີ ດັ່ງນີ້:

- ສະມາຊິກ ຊປປລ ຕ້ອງເປັນເຈົ້າການເຂົ້າຮ່ວມເຊື່ອມຊຶມ ແລະ ກຳແໜ້ນແນວທາງນະໂຍບາຍຂອງພັກ ຢ່າງເປັນປົກກະຕິ, ປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍຂອງລັດ, ກົດໝາຍຂອງ ຄຊປປລ ປ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

- ສະມາຊິກ ຊປປລ ຕ້ອງມີແນວຄິດຮັກຊາດ, ຮັກລະບອບປະຊາທິປະໄຕ, ລັກລັດທະນະທຳອັນດີງາມຂອງຊາດ-ຂອງເຜົ່າ, ປົກປັກຮັກສາ ແລະ ນຳໃຊ້ສິ່ງແວດລ້ອມແບບຍືນຍົງ.

- ມີແນວຄິດເປັນເອກະພາບກັບແນວທາງນະໂຍບາຍຂອງພັກ, ມີວິໄສທັດເບິ່ງກວ້າງມອງໄກ, ມີຄ່ານິຍົມທີ່ຖືກຕ້ອງ, ມີລະດັບເດັດດ່ຽວ ແລະ ປະຕິບັດກົດໝາຍ, ລະບຽບການຕ່າງໆ, ມີຄວາມຮັບຜິດຊອບຕໍ່ສັງຄົມ.

- ຊື່ສັດຕໍ່ປະເທດຊາດ, ຕໍ່ການຈັດຕັ້ງ, ຕໍ່ຄອບຄົວ ແລະ ໝູ່ເພື່ອນ.

- ຈຳແນກໄດ້ມິດ-ສັດຕູ, ບໍ່ມີແນວຄິດສ້າງກຸ່ມກ້ອນ, ກໍ່ພັກແບ່ງພວກ, ຈຸ້ມເຈື້ອເຊື້ອສາຍ.

- ສະມາຊິກ ຊປປລ ຕ້ອງໄດ້ຮັບການຍ້ອງຍໍປະຈຳປີ ປະຕິບັດໜ້າທີ່ວຽກງານວິຊາສະເພາະຢູ່ໃນການຈັດຕັ້ງຂອງຕົນຢ່າງມີຜົນສຳເລັດ.

- ຈ່າຍເງິນສະຕິຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງ ຄຊປປລ.

- ມີຄະແນນສະເລ່ຍທັງ 4 ດ້ານ: 9-10 ແມ່ນຈັດໃສ່ປະເພດແຂງ, 7-8,9 ແມ່ນຈັດໃສ່ປະເພດກາງ, 6,9 ລົງມາແມ່ນປະເພດອ່ອນ.

➢ ມາດຖານຄັດເລືອກສະມາຊິກ ຊປປລ ບ້ານ, ນັກຮຽນ-ນັກສຶກສາ, ໂຮງຈັກ-ໂຮງງານ ມີດັ່ງນີ້:

- ສະມາຊິກ ຊປປລ ປະກອບສ່ວນເຂົ້າໃນວຽກງານລວມຂອງອຳນາດການປົກຄອງຢ່າງເປັນປົກກະຕິ.
- ຕັ້ງໜ້າສ້າງສາ-ພັດທະນາເສດຖະກິດຄອບຄົວ ໃຫ້ມີຄວາມກ້າວໜ້າ, ສາມາດຍົກສູງຊີວິດການເປັນຢູ່ໃຫ້ດີຂຶ້ນເປັນກ້າວໆ ບົນພື້ນຖານຖືກຕ້ອງຕາມລະບຽບກົດໝາຍ.
- ຕັ້ງໜ້າເສີມຂະຫຍາຍມູນເຊື້ອຂອງຊາວໜຸ່ມ ໃຫ້ສະມາຊິກຊາວໜຸ່ມບໍ່ມີແນວຄິດສ້າງກຸ່ມກ້ອນ, ກໍ່ພັກແຍກພວກ, ຈຸ້ມເຈື້ອ, ເຊື້ອສາຍ ແລະ ເປັນສະມາຊິກ ຊປປລ ປອດຄະດີທຸກໆກໍລະນີ.
- ເສຍເງິນສະຕິໃຫ້ການຈັດຕັ້ງຢ່າງເປັນປົກກະຕິ.
- ມີຄະແນນສະເລ່ຍທັງ 4 ດ້ານ: 7,5-10 ແມ່ນຈັດໃສ່ປະເພດແຂງ, 6-7,4 ແມ່ນຈັດໃສ່ປະເພດກາງ, 5,9 ລົງມາ ແມ່ນຈັດໃສ່ປະເພດອ່ອນ.

## V. <u>ມາດຖານການຄັດເລືອກ ຄຊປປລ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ, ອົງການການເມືອງ 4 ບຸກ</u>

- ຄຊປປລຮາກຖານ, ໜ່ວຍຮາກຖານ ແລະ ໜ່ວຍຊາວໜຸ່ມທີ່ຂຶ້ນກັບ 85% ໄດ້ຮັບການຢັ້ງຢືນ 4 ບຸກ.
- ຄຊປປລ ໄດ້ລົງກໍ່ສ້າງຮາກຖານຕາມຂະແໜງການສາຍຕັ້ງ ຕິດພັນກັບການສ້າງຂະບວນການແຂ່ງຂັນ " ຮັກຊາດ ແລະ ພັດທະນາ " ຕິດພັນກັບທິດ 3 ສ້າງຂອງພັກ.
- ມີກອງເລຂາເປັນຜູ້ປະສານວຽກງານ ຄຊປປລ ໃນຂັ້ນຂອງຕົນ.
- ຈັດຕັ້ງຂະບວນການສົ່ງເສີມວິຊາການ ອົບຮົມກໍ່ສ້າງ ແລະ ຍົກລະດັບວຽກງານຊາວໜຸ່ມ
- ມີກອງອາສາສະໝັກ 1 ກອງຂຶ້ນໄປ ແລະ ມີການເຄື່ອນໄຫວເປັນປົກກະຕິ, ທັງມີຂະບວນການຟົດຟື້ນ ນັບທັງຫົວໜ່ວຍທຽບເທົ່າຂັ້ນເມືອງທີ່ໃຫຍ່ເຊັ່ນ: ມໍຊ, ສະຖາບັນ ແລະ ລັດວິສາຫະກິດ.

- ສະຫຼຸບ ແລະ ສົ່ງເງິນບຳລຸງໃຫ້ ຊູນກາງ ຊປປລ ຕາມກົດລະບຽບ ( ສຳລັບເອົາກະຊວງ ... ເປັນກະຊວງ, ອົງການການເມືອງ ) ໃຫ້ໄດ້ 100%
- ມີກອງທຶນພັດທະນາຊາວໜຸ່ມ ຫຼື ກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ 20,000,000 ກີບຂຶ້ນໄປ
- ມີກອງເຍົາວະຊົນທີ່ຂຶ້ນກັບໄດ້ນາມມະຍົດ 3 ດີ 4 ຮູ້ 65% ຂຶ້ນໄປ ( ສຳລັບກະຊວງທີ່ມີ ... ກອງເຍົາວະຊົນ ).
- ຕ້ອງມີການເຄື່ອນໄຫວວຽກງານປົກປ້ອງຊາວໜຸ່ມ-ເຍົາວະຊົນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ

## VI. ມາດຖານການຄັດເລືອກ ຄຊປປລ ແຂວງ-ນະຄອນຫຼວງ 4 ບຸກ

- ຄຊປປລ ເມືອງ ແລະ ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມຂອງ ... ນະຄອນຫຼວງ 85% ໄດ້ຮັບການຢັ້ງຢືນ 4 ບຸກ.
- ຄຊປປລ ໄດ້ສົ່ງເສີມກໍ່ສ້າງຮາກຖານການເມືອງພັດທະນາຊົມນະບົດຮອບດ້ານ ແລະ ຈັດຕັ້ງຜັນຂະຫຍາຍ ... ຂອງຕົນ ຕິດພັນກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ແລະ ຂະບວນການແຂ່ງຂັນ " ຮັກຊາດ ແລະ ພັດທະນາ ".
- ມີກອງຊາວໜຸ່ມອາສາສະໝັກຂັ້ນເມືອງທຸກໆເມືອງ ແລະ ຂັ້ນຂ້າງແຂວງ, ນະຄອນຫຼວງຢ່າງໜ້ອຍ ... ກອງຂຶ້ນໄປ ແລະ ມີການເຄື່ອນໄຫວປົກກະຕິ ທັງມີຂະບວນການຟົດຟື້ນ.
- ປະຕິບັດສິດ ແລະ ໜ້າທີ່ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ-ເຍົາວະຊົນ
- ເກັບເງິນສະຕິພາບໃນໜ່ວຍ, ຮາກຖານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ສົ່ງເງິນສະຕິໃຫ້ ... ປລ ຕາມກົດລະບຽບ ຄຊປປລ 100%.
- ມີກອງທຶນພັດທະນາຊາວໜຸ່ມ-ເຍົາວະຊົນ ຫຼື ກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລວມທັງໝົດ 20,000,000 ກີບຂຶ້ນໄປ.
- ສົ່ງບົດສະຫຼຸບການປະຕິບັດຂໍ້ແຂ່ງຂັນ 4 ບຸກໃຫ້ ສູນກາງ ຊປປລ ທຸກເດືອນຕໍ່ຄັ້ງ.
- ກອງເຍົາວະຊົນທີ່ຂຶ້ນກັບໄດ້ຮັບນາມມະຍົດ 3 ດີ 4 ຮູ້ກວມ 65% ຂຶ້ນໄປ.
- ຕ້ອງມີການເຄື່ອນໄຫວວຽກງານປົກປ້ອງຊາວໜຸ່ມ-ເຍົາວະຊົນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

## VII. ມາດຖານການຄັດເລືອກ ຄຊປປລ ເມືອງ ແລະ ທຽບເທົ່າຂັ້ນເມືອງ 4 ບຸກ

ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມ, ຫ້ອງການ ແລະ ຮາກຖານບ້ານ ທີ່ຂຶ້ນກັບໄດ້ຮັບການຢັ້ງຢືນ 4 ບຸກ 85% ຂຶ້ນໄປ.

- ຄຊປປລ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ ການກໍ່ສ້າງຮາກຖານການເມືອງພັດທະນາຊົມນະບົດຮອບດ້ານ, ຕິດພັນກັບການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນບ້ານພັດທະນາ.
- ສະຫຼຸບ ແລະ ສົ່ງເງິນສະຕິໃຫ້ ຄຊປປລ ແຂວງ-ນະຄອນຫຼວງ ຖືກຕ້ອງຕາມກົດລະບຽບ 100%.
- ມີກອງທຶນພັດທະນາຊາວໜຸ່ມ-ເຍົາວະຊົນ ໂຮມກັນຢ່າງໜ້ອຍ 10,000,000 ກີບຂຶ້ນໄປ.
- ມີກອງຊາວໜຸ່ມອາສາສະໝັກ 1 ກອງຂຶ້ນໄປ ແລະ ມີການເຄື່ອນໄຫວປົກກະຕິທັງມີຂະບວນການຟົດຟື້ນ.
- ກອງເຍົາວະຊົນທີ່ຂຶ້ນກັບໄດ້ຮັບນາມມະຍົດ 3 ດີ 4 ຮູ້ກວມ 65% ຂຶ້ນໄປ.
- ມີຕົວແບບ 1-3 ຕົວແບບ ສາມາດໃຫ້ ຄຊປປລ ແຕ່ລະຂັ້ນ ແລກປ່ຽນ ແລະ ຖອດຖອນໄດ້ເຊັ່ນ:
  - ຕົວແບບການບຸກຟັງ-ລ້ຽງສັດ.
  - ຕົວແບບຮຽນດີຮຽນເກັ່ງ.
  - ຕົວແບບວຽກດີຄົນເດັ່ນ, ຮຽນດີ, ສອນເກັ່ງ.
- ຕ້ອງມີການເຄື່ອນໄຫວວຽກງານປົກປ້ອງຊາວໜຸ່ມ-ເຍົາວະຊົນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

## VIII. ມາດຖານການຄັດເລືອກຮາກຖານ, ໜ່ວຍຊາວໜຸ່ມຮາກຖານ 4 ບຸກ

ມາດຖານການຄັດເລືອກຮາກຖານ, ໜ່ວຍຮາກຖານ 4 ບຸກ ແມ່ນໄດ້ແຍກອອກເປັນ 2 ທາງລຸ່ມນີ້:

1. ໜ່ວຍຮາກຖານ, ຮາກຖານຊາວໜຸ່ມອ້ອມຂ້າງເມືອງ, ຂະແໜງການອ້ອມຂ້າງແຂວງ, ກະຊວງ-ອົງການລັດທຽບເທົ່າກະຊວງ, ອົງການການເມືອງ

2. ໜ່ວຍຊາວໜຸ່ມ, ໜ່ວຍຮາກຖານ, ຮາກຖານບ້ານ, ໂຮງຮຽນ, ໂຮງຈັກ-ໂຮງງານ

➢ ມາດຖານການຄັດເລືອກ ຄຊປປລ ຮາກຖານ, ໜ່ວຍຮາກຖານອ້ອມຂ້າງເມືອງ, ໜ່ວຍຊາວໜຸ່ມອ້ອມຂ້າງແຂວງ-ນະຄອນຫຼວງ, ກະຊວງ-ອົງການລັດທຽບເທົ່າກະຊວງ, ອົງການການເມືອງ.

- ມາດຖານຄັດເລືອກ ຄຊປປລ ຮາກຖານ: ໜ່ວຍຊາວໜຸ່ມ, ຈຸຊາວໜຸ່ມທີ່ຂຶ້ນກັບ ຕ້ອງໄດ້ຮັບໃບຢັ້ງຢືນ 4 ບຸກ ກວມເອົາ 85%ຂຶ້ນໄປ.

- ມາດຖານຄັດເລືອກ ຄຊປປລ ໜ່ວຍຮາກຖານ: ຈຸຊາວໜຸ່ມ, ສະມາຊິກ ຊປປລ ທີ່ຂຶ້ນກັບ ຕ້ອງໄດ້ຮັບໃບຢັ້ງຢືນ 4 ບຸກ ກວມເອົາ 85% ຂຶ້ນໄປ.

- ມາດຖານຄັດເລືອກໜ່ວຍຊາວໜຸ່ມ: ສະມາຊິກ ຊປປລ ຕ້ອງໄດ້ຮັບໃບຢັ້ງຢືນ 4 ບຸກກວມເອົາ 85% ຂຶ້ນໄປ.

- ເກັບເງິນສະຕິຂອງສະມາຊິກ ຊປປລ ແລະ ບັນດາໜ່ວຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ສົ່ງໃຫ້ຂັ້ນເທິງຖັດຕົນໃຫ້ໄດ້ຕາມລະບຽບການ 100%.

- ມີເງິນກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ 1.000.000 ກີບຂຶ້ນໄປ.

- ກອງເຍົາວະຊົນທີ່ຂຶ້ນກັບໄດ້ຮັບນາມມະຍົດ 3 ດີ 4 ຮູ້ກວມ 65% ຂຶ້ນໄປ ( ສະເພາະຮາກຖານທີ່ມີກອງເຍົາວະຊົນ )

➢ ມາດຖານຄັດເລືອກຄະນະຊາວໜຸ່ມຮາກຖານບ້ານ, ໂຮງຮຽນ, ໂຮງຈັກ-ໂຮງງານ.

- ມາດຖານຄັດເລືອກ ຄຊປປລ ຮາກຖານ: ໜ່ວຍຊາວໜຸ່ມ, ຈຸຊາວໜຸ່ມທີ່ຂຶ້ນກັບ ຕ້ອງໄດ້ຮັບໃບຢັ້ງຢືນ 4ບຸກ ກວມເອົາ 70% ຂຶ້ນໄປ.

- ມາດຖານຄັດເລືອກ ຄຊປປລ ໜ່ວຍຮາກຖານ: ຈຸຊາວໜຸ່ມ, ສະມາຊິກ ຊປປລ ທີ່ຂຶ້ນກັບ ຕ້ອງໄດ້ຮັບໃບຢັ້ງຢືນ 4 ບຸກກວມເອົາ 70% ຂຶ້ນໄປ.

- ມາດຖານຄັດເລືອກໜ່ວຍຊາວໜຸ່ມ: ສະມາຊິກ ຊປປລ ຕ້ອງໄດ້ຮັບໃບຢັ້ງຢືນ 4 ບຸກກວມເອົາ 70% ຂຶ້ນໄປ.

- ສະມາຊິກ ຊປປລ ປະກອບສ່ວນເຂົ້າໃນວຽກງານລວມຂອງບ້ານຢ່າງເປັນປົກກະຕິ.

- ເກັບເງິນສະຕິຂອງສະມາຊິກ ຊປປລ ພາຍໃນຄວາມຮັບຜິດຊອບຂອງຕົນ ແລ້ວສົ່ງໃຫ້ຂັ້ນເທິງຢ່າງເປັນປົກກະຕິ ແລະ ຕາມລະບຽບການ 100%.

- ມີເງິນກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ 500.000 ກີບ ຂຶ້ນໄປ.

## IX. ມາດຖານການຄັດເລືອກ ຄຊປປລ ແຂວງ-ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ ອົງການການເມືອງ ທີ່ຈະຮັບທຸງໄຊ

- ການຈັດຕັ້ງປະຕິບັດຂະບວນການຂໍແຂ່ງຂັນ 4 ບຸກ ມີຜົນງານພົ້ນເດັ່ນເປັນຕົວແບບໃຫ້ ຄຊປປລ ແຕ່ລະຂັ້ນມາແລກປ່ຽນ ແລະ ຖອດຖອນເປັນບົດຮຽນຢ່າງນ້ອຍ 2-3 ຕົວແບບ.

ຄຊປປລ ແຂວງ, ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ...
ຍັງຢືນເປັນ ຄຊປປລ 4 ບຸກ 3 ປີຕິດຕໍ່ກັນ ຈຶ່ງໄດ້ສະເໜີໃຫ້ຫົວໜ້າ 4 ບຸກ, ຈາກສູນກາງ ຊປປລ.

- ຄຊປປລ ເມືອງ, ຄຊປປລ ຮາກຖານ, ໜ່ວຍຮາກຖານ ຂັ້ນຂ້າງແຂວງ-ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ທີ່ໄດ້ຮັບການຢັ້ງຢືນເປັນ ຄຊປປລ 4 ບຸກ 3 ປີຕິດຕໍ່ກັນ ຈຶ່ງໄດ້ຮັບ ... ເທົ່າ 4 ບຸກ ຈາກ ຄຊປປລ ແຂວງ-ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ...

## X. ການແຕ່ງຕັ້ງຄະນະຮັບຜິດຊອບ

ການແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງປະຕິບັດຂະບວນການ 4 ບຸກແມ່ນແຕ່ງເປັນສາຍກະຊວງ ແລະ ສາຍທ້ອງຖິ່ນດັ່ງນີ້:

1. ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ
   1) ຮອງເລຂາ, ປະທານກວດກາ ຄະນະພັກກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນປະທານ.
   2) ເລຂາຄະນະບໍລິຫານງານ ຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນຮອງປະທານ.
   3) ຮອງເລຂາ, ປະທານກວດກາ ຄະນະບໍລິຫານງານ ຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນຄະນະ.
   4) ຮອງປະທານກວດກາ ຄະນະບໍລິຫານງານ ຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນຄະນະ.
   5) ຫົວໜ້າກອງເລຂາ ຄະນະບໍລິຫານງານ ຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນຄະນະ.
2. ຂັ້ນແຂວງ-ນະຄອນຫຼວງ
   1) ສະຫາຍ ຄະນະປະຈຳພັກແຂວງ ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ ເປັນປະທານ.
   2) ສະຫາຍ ເລຂາຄະນະບໍລິຫານງານ ຊປປລ ແຂວງ-ນະຄອນຫຼວງ ເປັນຮອງປະທານ.
   3) ສະຫາຍ ຮອງເລຂາ, ປະທານກວດກາຄະນະບໍລິຫານງານ ຊປປລ ແຂວງ-ນະຄອນຫຼວງ ເປັນຄະນະ.
   4) ສະຫາຍ ຫົວໜ້າຂະແໜງກວດກາ ເປັນຄະນະ.
   5) ສະຫາຍ ຫົວໜ້າຫ້ອງການ ເປັນຄະນະ.
   6) ສະຫາຍ ຫົວໜ້າຂະແໜງຈັດຕັ້ງ ເປັນຄະນະ.
   7) ສະຫາຍ ຫົວໜ້າຂະແໜງຂະບວນການ ເປັນຄະນະ.
3. ຂັ້ນເມືອງ
   1) ສະຫາຍ ຄະນະປະຈຳພັກເມືອງ ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ ເປັນປະທານ.
   2) ສະຫາຍ ເລຂາຄະນະບໍລິຫານງານ ຊປປລ ເມືອງ ເປັນຮອງປະທານ.
   3) ສະຫາຍ ຮອງເລຂາ, ປະທານກວດກາຄະນະບໍລິຫານງານ ຊປປລ ເມືອງ ເປັນຄະນະ.
   4) ສະຫາຍ ກຳມະການຄະນະບໍລິຫານງານ ຊປປລ ເມືອງ 2 ສະຫາຍ ເປັນຄະນະ.
   5) ສະຫາຍ ຫົວໜ້າໜ່ວຍງານກວດກາຫ້ອງການ ຊປປລ ເມືອງ ເປັນຄະນະ.

4. ຂັ້ນຂອງກຸ່ມ

1) ຄະນະຂັ້ນຮາກຖານຜູ້ຊີ້ນໍາອົງການຈັດຕັ້ງມະຫາຊົນ ຫຼື ເລຂາໜ່ວຍພັກ ເປັນປະທານ.

2) ເລຂາຄະນະບໍລິຫານງານ ຊປປລ ຮາກຖານ ຫຼື ເລຂາໜ່ວຍຊາວໜຸ່ມຮາກຖານ ເປັນຮອງປະທານ.

3) ຮອງເລຂາ, ປະທານກວດກາຂອງຄະນະບໍລິຫານງານ ຊປປລ ຮາກຖານ ຫຼື ຮອງເລຂາໜ່ວຍຊາວໜຸ່ມຮາກຖານ ເປັນຄະນະ.

4) ກໍາມະການ ຄຊປປລ ຮາກຖານ 1 ສະຫາຍ ແລະ ສະມາຊິກໃນໜ່ວຍ 1 ສະຫາຍ ເປັນຄະນະ.

5. ຂັ້ນຮາກຖານ ຫຼື ໜ່ວຍຮາກຖານ

1) ເລຂາຄະນະພັກຮາກຖານ ຫຼື ເລຂາໜ່ວຍພັກ ເປັນປະທານ.

2) ເລຂາຄະນະບໍລິຫານງານ ຊປປລ ຮາກຖານ ຫຼື ເລຂາໜ່ວຍ ຊປປລ ຮາກຖານ ເປັນຮອງ.

3) ຮອງເລຂາ, ປະທານກວດກາ ຄຊປປລ ຮາກຖານ ຫຼື ໜ່ວຍ ເປັນຄະນະ.

4) ຄະນະບໍລິຫານງານ ຊປປລ ຮາກຖານ ຫຼື ໜ່ວຍ 2 ສະຫາຍ ເປັນຄະນະ.

ການແຕ່ງຕັ້ງຄະນະຮັບຜິດຊອບແຕ່ລະຂັ້ນ ແມ່ນໃຫ້ແຕ່ງຕັ້ງແຕ່ລະອະນຸກໍາມະການເຊັ່ນ: ຄະນະຮັບຜິດຊອບຊີ້ນໍາລວມ, ຄະນະປະຕິບັດຕົວຈິງ, ຄະນະກວດກາ, ຄະນະເລຂາທິການ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈໍາເປັນ.

## XI. ການກວດກາການຈັດຕັ້ງປະຕິບັດ 4 ບຸກ

ພາຍຫຼັງສະຫຼຸບປະເມີນຜົນແລ້ວ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກຄະນະກວດກາ ຈຶ່ງປະຕິບັດການຍ້ອງຍໍ.

- ຄຊປປລ ແຂວງ,ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ແມ່ນຄະນະຮັບຜິດຊອບກວດກາ ແລະ ປະເມີນຜົນຂໍ້ແຂ່ງຂັນ 4 ບຸກ ຄະນະບໍລິຫານງານ ສູນກາງ ຊປປລ ເປັນຜູ້ກວດກາ ແລະ ປະເມີນຜົນ.
- ຄຊປປລ ທຽບເທົ່າ ຄຊປປລ ເມືອງ, ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມທີ່ຂຶ້ນກັບ ຄຊປປລ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ແມ່ນໃຫ້ຄະນະກວດກາ ຄະນະບໍລິຫານງານຊາວໜຸ່ມກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ເປັນຜູ້ກວດກາ ແລະ ປະເມີນຜົນ.
- ຄຊປປລ ເມືອງ, ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມ ທີ່ຂຶ້ນກັບ ຄຊປປລ ແຂວງ, ນະຄອນຫຼວງ ແມ່ນໃຫ້ຄະນະກວດກາ ຄະນະບໍລິຫານງານຊາວໜຸ່ມ ແຂວງ-ນະຄອນຫຼວງ ເປັນຜູ້ກວດກາ ແລະ ປະເມີນຜົນ.
- ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມທີ່ຂຶ້ນກັບ ຄຊປປລ ເມືອງ ແມ່ນໃຫ້ ຄຊປປລ ເມືອງ ເປັນຜູ້ກວດກາ ແລະ ປະເມີນຜົນ.

## XII. ສິດ ແລະ ງົບປະມານ

### 1. ສິດ

- ຄຊປປລ ແຂວງ, ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ແມ່ນຄະນະບໍລິຫານງານ ສູນກາງ ຊປປລ ເປັນຜູ້ອອກໃບຢັ້ງຢືນ 4 ບຸກໃຫ້.

- ຄຊປປລ ທຸກເທິງ ຄຊປປລ ເມືອງ, ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມ ຂັ້ນກາງ ... ປົນ ເມືອງ ແລະ ສະມາຊິກ ຊປປລ ທີ່ຂຶ້ນກັບກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງແມ່ນຄະນະບໍລິຫານງານຊາວໜຸ່ມກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງເປັນຜູ້ອອກໃບຢັ້ງຢືນ 4 ບຸກໃຫ້.

- ຄຊປປລ ເມືອງ, ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມ ແລະ ສະມາຊິກ ຊປປລ ທີ່ຂຶ້ນກັບຄະນະບໍລິຫານງານຊາວໜຸ່ມແຂວງ ແມ່ນຄະນະບໍລິຫານງານຊາວໜຸ່ມແຂວງ ເປັນຜູ້ອອກໃບຢັ້ງຢືນ 4 ບຸກໃຫ້.

- ຄຊປປລ ຮາກຖານ, ໜ່ວຍຮາກຖານ, ໜ່ວຍຊາວໜຸ່ມ, ຮາກຖານບ້ານ ແລະ ສະມາຊິກ ຊປປລ ທີ່ຂຶ້ນກັບຄະນະບໍລິຫານງານຊາວໜຸ່ມເມືອງ ແມ່ນຄະນະບໍລິຫານງານຊາວໜຸ່ມເມືອງ ເປັນຜູ້ອອກໃບຢັ້ງຢືນ 4 ບຸກໃຫ້.

2. <u>ງົບປະມານ</u>

- ຄຊປປລ ທີ່ມີສິດອອກໃບຢັ້ງຢືນຕ້ອງກຸ້ມຕົນເອງດ້ານງົບປະມານທຸກດ້ານ.
- ຂຶ້ນແຜນຂໍງົບປະມານ ແລະ ຊອກແຫຼ່ງລາຍຮັບຕາມກົດລະບຽບ

## XIII. <u>ການຢັ້ງຢືນ 4 ບຸກ</u>

- ຄະນະບໍລິຫານງານ ຊປປລ ແຕ່ລະຂັ້ນສະຫຼຸບການຈັດຕັ້ງປະຕິບັດ ຂະບວນການຂໍແຂ່ງຂັນ ແລະ ປະກອບເອກະສານສະເໜີຕໍ່ ຄະນະບໍລິຫານງານ ຄຊປປລ ຂັ້ນເທິງຖັດຕົນຕາມລຳດັບ ແລະ ມີການຢັ້ງຢືນຂອງຄະນະພັກທີ່ ຄຊປປລ ແຕ່ລະຂັ້ນຂຶ້ນກັບ.

❖ ກຳນົດເວລາອອກໃບຢັ້ງຢືນ 4 ບຸກ

- ການຢັ້ງຢືນ 4 ບຸກແຕ່ລະຂັ້ນ ແມ່ນປະຕິບັດເປັນເອກະພາບກັນປີລະ 1 ຄັ້ງ(ປະຈຳປີ).
- ຄຊປປລ ແຂວງ-ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ໄດ້ຮັບການຢັ້ງຢືນ 4 ບຸກ 3 ປີຕິດຕໍ່ກັນໄດ້ຮັບຫຼຽນໄຊຂອງ ສູນກາງ ຊປປລ.
- ຄຊປປລ ຮາກຖານ, ໜ່ວຍຮາກຖານ, ເມືອງ ໄດ້ຮັບການຢັ້ງຢືນ 4 ບຸກ 3 ປີຕິດຕໍ່ກັນໄດ້ຮັບຫຼຽນໄຊຂອງ ຄຊປປລ ແຂວງ-ນະຄອນຫຼວງ, ໃນກໍລະນີຖ້າເປັນເມືອງພົ້ນເດັ່ນຈະໄດ້ຮັບການຍ້ອງຍໍຈາກ ຄຊປປລ ສູນກາງ ຫຼື ລັດຖະບານ ຕາມລະດັບຜົນງານ
- ການຢັ້ງຢືນສະມາຊິກ ຊປປລ 4 ບຸກ ແມ່ນປະຕິບັດເປັນເອກະພາບປີລະ 1 ຄັ້ງ ແລະ ຖ້າໄດ້ຮັບການຢັ້ງຢືນ 4 ບຸກ 3 ປີຕິດຕໍ່ກັນ ແມ່ນຈະໄດ້ຮັບໃບຍ້ອງຍໍຈາກ ຄຊປປລ ສູນກາງ ຫຼື ໃບຍ້ອງຍໍຫຼຽນກາ, ຫຼຽນໄຊ ຈາກອົງການລັດຕາມຜົນງານຕົວຈິງ ( ແຕ່ໃນກໍລະນີພິເສດ, ທີ່ມີຂະບວນການດີເດັ່ນແທ້ແມ່ນສາມາດຍ້ອງຍໍໄດ້ )

## XIV. <u>ວິທີຈັດຕັ້ງປະຕິບັດ ແລະ ຜົນສັກສິດ</u>

1. <u>ວິທີຈັດຕັ້ງປະຕິບັດ</u>

- ຄະນະຊາວໜຸ່ມ ແຕ່ລະຂັ້ນຈັດຕັ້ງເຜີຍແຜ່ເຊື່ອມຊຶມຢ່າງເລິກເຊິ່ງ, ບົດແນະນຳຂອງຄະນະເລຂາທິການສູນກາງ ຊປປລ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

- ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມໃນຂັ້ນຂອງຕົນ ໂດຍແມ່ນສະຫາຍເລຂາເປັນຜູ້ຮັບຜິດຊອບໂດຍກົງເຊິ່ງປະກອບດ້ວຍອົງການທີ່ເປັນເສນາທິການເຊັ່ນ: ຢູ່ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງແມ່ນຄະນະກອງການ, ຢູ່ແຂວງ-ນະຄອນຫຼວງ, ເມືອງ, ຮາກຖານ, ໜ່ວຍຮາກຖານ ແມ່ນຄະນະກອງການ ແລະ ຂະແໜງການກ່ຽວຂ້ອງ.

- ຄະນະພັກກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການເມືອງ ຄະນະປະຈຳພັກແຂວງ-ນະຄອນຫຼວງ, ຄະນະປະຈຳພັກເມືອງ, ຄະນະພັກກົມ-ກອງ, ຄະນະພັກຮາກຖານຜູ້ຊີ້ນຳວຽກງານອົງການຈັດຕັ້ງ

ນະຄາລິນ, ກິດຈະກໍາສົ່ງເສີມພິເສດຂອງຄະນະພັກຕົນ, ອາງແຜນການ, ວິທີການ ແລະ ຜູ້ນໍາພາ ດໍາເນີນການສໍາຫຼວດ ກອດກາ, ກິລາຄາແບບປະເພດ, ປະເມີນຜົນໃນຂັ້ນຄະນະພັກຂັ້ນຂອງຕົນເອົາປີກາກະກິດແຕ່ລະປີ.

- ເວລາຈັດຕັ້ງປະຕິບັດຖ້າຫາກຕິດຂັດບັນຫາໃດໃນການກອດກາລຸລົມ, ຖ້າມີບັນຫາໃດໜຶ່ງມາຕ້ອງລາຍງານ ສອງແສງໃຫ້ຄະນະພັກຂັ້ນເທິງຖັດຕົນ ແລະ ຄະນະກອດກາ ຄະນະບໍລິຫານງານ ສູນກາງ ຊປປລ ເພື່ອມີທິດຊີ້ນໍາ ແລະ ແກ້ໄຂປາງທັນການ.

- ການສໍາຫຼວດກອດກາກິລາຄາແບບປະເພດ, ກູມນະພາບການຈັດຕັ້ງຮາກຖານຊາວໜຸ່ມ ແລະ ສະມາຊິກ ຊປປລ 1 ປີໃດດໍາເນີນເທື່ອໜຶ່ງ ໃຫ້ສໍາເລັດໃນເດືອນກໍລະກົດແຕ່ລະປີ. ພາຍຫຼັງສໍາເລັດໃນຂັ້ນຂອງຕົນຕ້ອງມີການ ສະຫຼຸບກອດກອບບົດຮຽນ ແລະ ລາຍງານເປັນລາຍລັກອັກສອນໃຫ້ຄະນະຊາວໜຸ່ມຂັ້ນເທິງຖັດຕົນ, ເພື່ອລາຍງານ ໃຫ້ຄະນະກອດກາ ຄະນະບໍລິຫານງານ ສູນກາງ ຊປປລ.

2. ຜົນສັກສິດ

- ບົດແນະນໍາສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.
- ສໍາລັບບົດແນະນໍາສະບັບນີ້, ໃຊ້ປ່ຽນແທນສະບັບເລກທີ 096/ຄຂ, ລົງວັນທີ 22 ກຸມພາ 2012.

ຄະນະບໍລິຫານງານ ສູນກາງ ຊປປລ

ເລຂາ

ດຣ. ສອນທະນູ ທໍາມະວົງ